ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ ເລກທີ 297 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 30.12.2010

**ລັດຖະດຳລັດ**

**ຂອງປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ກ່ຽວກັບການປະກາດໃຊ້ກົດໝາຍ**

**ວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປັບປຸງ**

------------------------------------

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດ ໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 138/ສພຊ, ລົງວັນທີ 17 ທັນວາ 2010 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປັບປຸງ;
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 76/ຄປຈ, ລົງວັນທີ 27 ທັນວາ 2010.

***ປະທານປະເທດ***

***ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :***

***<u>ມາດຕາ 1</u>*** : ປະກາດໃຊ້ກົດໝາຍ ວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປັບປຸງ.

***<u>ມາດຕາ 2</u>*** : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ຈູມມະລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ ເລກທີ 138 / ສພຊ

**ມະຕິຕົກລົງ**

**ຂອງ**

**ສະພາແຫ່ງຊາດ ແຫ່ງ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ກ່ຽວກັບການຕົກລົງຮັບຮອງເອົາ**

**ກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປັບປຸງ**

-------------------------

- ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະ ມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VI ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປັບປຸງ ໃນວາລະປະຊຸມຕອນເຊົ້າຂອງວັນທີ 17 ທັນວາ 2010.

**ກອງປະຊຸມໄດ້ຕົກລົງ:**

**<u>ມາດຕາ 1.</u>** ຮັບຮອງເອົາກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປັບປຸງ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

**<u>ມາດຕາ 2.</u>** ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 17 ທັນວາ 2010

ປະທານສະພາແຫ່ງຊາດ

ທອງສິງ ທຳມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 06 /ສພຊ

ນະຄອນຫລວງວຽງຈັນ, ວັນທີ 17 ທັນວາ 2010

# ກົດໝາຍ
# ວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1(ປັບປຸງ). ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫລັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ການກວດກາ ວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອເຮັດໃຫ້ວຽກ ງານດັ່ງກ່າວ ໄດ້ຮັບການແກ້ໄຂຢ່າງສັນຕິວິທີ, ເປັນທຳ ແລະ ວ່ອງໄວ ແນໃສ່ຊຸກຍູ້ການດຳເນີນ ການຜະລິດ-ທຸລະກິດໃຫ້ຂະຫຍາຍຕົວ ແລະ ເຊື່ອມໂຍງເຂົ້າສາກົນ, ສ້າງສະພາບແວດລ້ອມເອື້ອອຳນວຍໃຫ້ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ, ປະກອບສ່ວນພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2(ປັບປຸງ). ຂໍ້ຂັດແຍ່ງ ແລະ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນ ຂໍ້ພິພາດທາງດ້ານຜົນປະໂຫຍດ ລະຫວ່າງນິຕິບຸກຄົນດ້ວຍກັນ, ນິຕິບຸກຄົນກັບບຸກຄົນ, ບຸກຄົນກັບບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເກີດຂຶ້ນຈາກການລະເມີດສັນຍາ, ການດຳເນີນການຜະລິດ-ທຸລະກິດ.

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນ ການແກ້ໄຂຂໍ້ພິພາດທາງດ້ານຜົນປະໂຫຍດ ດ້ວຍການໄກ່ເກ່ຍ ຫລື ດ້ວຍການຕັດສິນ ຊຶ່ງດຳເນີນຢູ່ນອກລະບົບສານປະຊາຊົນ.

**ມາດຕາ 3(ໃໝ່). ການອະທິບາຍຄຳສັບ**

ຄຳສັບຕ່າງໆ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຄູ່ກໍລະນີ** ໝາຍເຖິງ ຄູ່ຂັດແຍ່ງທາງດ້ານເສດຖະກິດ ຊຶ່ງປະກອບດ້ວຍ ຝ່າຍຮ້ອງຂໍ ແລະ ຝ່າຍຖືກຮອງຂໍ;
2. **ຜູ້ໄກ່ເກ່ຍ** ໝາຍເຖິງ ຜູ້ທີ່ຖືກເລືອກ ໂດຍຄູ່ກໍລະນີ ຫລື ສູນ ຫລື ຫ້ອງການແກ້ໄຂຂໍ້ຂັດແຍ່ງ

ທາງດ້ານເສດຖະກິດ ຈາກບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນ ໃຫ້ເປັນຄົນກາງ ເພື່ອອຳນວຍຄວາມສະດວກ, ຊ່ວຍເຫລືອ ແລະ ໃຫ້ຄຳປຶກສາ ໃນການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດໃດໜຶ່ງ;

3. **ກຳມະການຕັດສິນ** ໝາຍເຖິງ ຜູ້ທີ່ຖືກເລືອກ ໂດຍຄູ່ກໍລະນີ ຫລື ສູນ ຫລື ຫ້ອງການແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດ ຈາກບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນ ໃຫ້ເປັນກຳມະການຕັດສິນ ຂໍ້ຂັດແຍ່ງທາງດ້ານເສດຖະກິດໃດໜຶ່ງ;
4. **ຜູ້ຕາງໜ້າ** ໝາຍເຖິງ ບຸກຄົນ ທີ່ໄດ້ຮັບການມອບສິດ ຈາກຄູ່ກໍລະນີຝ່າຍໃດໜຶ່ງ ເພື່ອໃຫ້ປະຕິບັດໜ້າທີ່ແທນຕົນ ຕາມລະບຽບກົດໝາຍ;
5. **ຜູ້ຊ່ຽວຊານ** ໝາຍເຖິງ ບຸກຄົນ ທີ່ມີຄວາມຮູ້, ຄວາມຊຳນິຊຳນານ ແລະ ປະສົບການ ໃນວິຊາສະເພາະໃດໜຶ່ງ ທີ່ຖືກຮັບຮູ້ຈາກສະຖາບັນ ຫລື ອົງການທີ່ກ່ຽວຂ້ອງ;
6. **ຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫລື ສາກົນ** ໝາຍເຖິງ ຄຳຕັດສິນຂອງກຳມະການ ຫລື ຄະນະກຳມະການຕັດສິນຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງຕ່າງປະເທດ ຫລື ສາກົນ ທີ່ດຳເນີນການຕັດສິນຢູ່ ຕ່າງປະເທດ ຫລື ສປປ ລາວ;
7. **ການຄ້າສາກົນ** ໝາຍເຖິງ ການຊື້-ຂາຍສິນຄ້າ ຫລື ການບໍລິການ ທີ່ຜ່ານດິນແດນຂອງສອງ ຫລື ຫລາຍປະເທດໂດຍບໍ່ຂຶ້ນກັບສັນຊາດຂອງຄູ່ສັນຍາ;
8. **ການລົງທຶນຕ່າງປະເທດ** ໝາຍເຖິງ ການລົງທຶນຂອງຜູ້ລົງທຶນຕ່າງປະເທດ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;
9. **ການດຳເນີນການຜະລິດ-ທຸລະກິດ** ໝາຍເຖິງ ການຄ້າ, ການລົງທຶນ, ການບໍລິການ ແລະ ອື່ນໆ.

## ມາດຕາ 4(ໃໝ່). ນະໂຍບາຍຂອງລັດກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ລັດ ສົ່ງເສີມໃຫ້ບຸກຄົນ, ການຈັດຕັ້ງທຸລະກິດ ລວມທັງພາກລັດ ແລະ ເອກະຊົນ ໃຫ້ດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໂດຍສັນຕິວິທີ ດ້ວຍການໄກ່ເກ່ຍ ຫລື ດ້ວຍການຕັດສິນ.

ລັດ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສາມາດເຄື່ອນໄຫວປະຕິບັດສິດ ແລະ ໜ້າທີ່ຂອງຕົນຕາມລະບຽບກົດໝາຍຢ່າງມີປະສິດທິຜົນ.

ລັດ ສົ່ງເສີມໃຫ້ບຸກຄົນ, ການຈັດຕັ້ງເອກະຊົນ ເຂົ້າຮ່ວມພັດທະນາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ລັດ ອະນຸຍາດໃຫ້ສ້າງຕັ້ງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ແລະ

ສະເພາະກິດຊຶ່ງໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 5(ໃໝ່). ສິດໃນການເລືອກການແກ້ໄຂຂໍ້ຂັດແຍ່ງ**

ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທັງພາຍໃນ ຫລື ຕ່າງປະເທດ ມີສິດເລືອກເອົາການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດພາຍໃຕ້ກົດໝາຍສະບັບນີ້.

ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງຕ່າງປະເທດ ທີ່ດຳເນີນທຸລະກິດ ການຄ້າສາກົນ ຫລື ການລົງທຶນ ຕ່າງປະເທດ ຢູ່ ສປປ ລາວ ມີສິດເລືອກເອົາ ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຕ່າງປະເທດ ຫລື ສາກົນ ລວມທັງກຳມະການ ຫລື ຄະນະກຳມະການຕັດສິນ, ກົດໝາຍ, ລະບຽບການດຳເນີນ ສະຖານທີ່ ແລະ ພາສາ ຕາມການຕົກລົງກັນ.

**ມາດຕາ 6(ໃໝ່). ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ເກີດຂຶ້ນຈາກການດຳເນີນການຜະລິດ-ທຸລະກິດ ຕາມຄວາມສະໝັກໃຈຂອງຄູ່ກໍລະນີ.

**ມາດຕາ 7. ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍການປະສານງານ, ແລກປ່ຽນບົດຮຽນ, ຍົກລະດັບຄວາມຮູ້, ຄວາມສາມາດ ໃຫ້ບຸກຄະລາກອນ ຂອງການຈັດຕັ້ງແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ປະຕິບັດວຽກງານດັ່ງກ່າວໃຫ້ສອດຄ່ອງກັບສັນຍາ ຫລື ສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ
### ໝວດທີ 1
### ຫລັກການ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

**ມາດຕາ 8(ໃໝ່). ຫລັກການພື້ນຖານຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

**ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງປະຕິບັດຕາມຫລັກການພື້ນຖານ ດັ່ງນີ້:**

1. ການຮັບປະກັນຄວາມຍຸຕິທຳ ແລະ ຄວາມສອດຄ່ອງກັບກົດໝາຍ;
2. ຄວາມສະໝັກໃຈຂອງຄູ່ກໍລະນີ;

3. ຄວາມສະເໝີພາບຂອງຄູ່ກໍລະນີ;
4. ຄວາມເປັນເອກະລາດ ແລະ ທ່ຽງທຳ ຂອງຜູ້ໄກ່ເກ່ຍ ຫລື ກຳມະການຕັດສິນ;
5. ພາສາທີ່ນຳໃຊ້;
6. ການຮັບປະກັນຄວາມລັບ.

**ມາດຕາ 9(ໃໝ່). ການຮັບປະກັນຄວາມຍຸຕິທຳ ແລະ ຄວາມສອດຄ່ອງກັບກົດໝາຍ**

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຜູ້ໄກ່ເກ່ຍ ຫລື ກຳມະການຕັດສິນ ຕ້ອງຮັບປະກັນຄວາມຍຸຕິທຳ ແລະ ໃຫ້ມີຄວາມສອດຄ່ອງກັບລະບຽບກົດໝາຍ.

**ມາດຕາ 10(ໃໝ່). ຄວາມສະໝັກໃຈຂອງຄູ່ກໍລະນີ**

ຄູ່ກໍລະນີ ມີສິດນຳເອົາຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງກົດໝາຍສະບັບນີ້ ສະເໜີຕໍ່ ສູນ ຫລື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອແກ້ໄຂໂດຍບໍ່ມີການບັງຄັບ, ນາບຂູ່ ຈາກບຸກຄົນ, ການຈັດຕັ້ງ ໃດໜຶ່ງ.

**ມາດຕາ 11(ປັບປຸງ). ຄວາມສະເໝີພາບຂອງຄູ່ກໍລະນີ**

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຄູ່ກໍລະນີແຕ່ລະຝ່າຍ ມີສິດສະເໝີພາບຕໍ່ໜ້າກົດໝາຍ ໂດຍບໍ່ຈຳແນກເພດ, ເຊື້ອຊາດ, ສັນຊາດ, ເຜົ່າ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ, ພາສາ, ລະດັບການສຶກສາ, ອາຍຸ, ຄວາມເຊື່ອຖື, ພູມລຳເນົາ ແລະ ອື່ນໆ.

ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ດຳເນີນທຸລະກິດ ຢູ່ ສປປ ລາວ ມີສິດສະເໝີພາບຄືກັນກັບພົນລະເມືອງລາວ ຖ້າວ່າກົດໝາຍຫາກບໍ່ໄດ້ກຳນົດໄວ້ຢ່າງອື່ນ.

**ມາດຕາ 12(ປັບປຸງ). ຄວາມເປັນເອກະລາດ ແລະ ທ່ຽງທຳ ຂອງຜູ້ໄກ່ເກ່ຍ ຫລື ກຳມະການຕັດສິນ**

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຜູ້ໄກ່ເກ່ຍ ຫລື ກຳມະການຕັດສິນ ຕ້ອງປະຕິບັດໜ້າທີ່ ຂອງຕົນ ຢ່າງເປັນເອກະລາດ, ດ້ວຍຄວາມທ່ຽງທຳ ແລະ ປອດໃສ ພາຍໃຕ້ລະບຽບກົດໝາຍ, ປາສະຈາກການແຊກແຊງຈາກບຸກຄົນ ຫລື ການຈັດຕັ້ງ ໃດໜຶ່ງ.

**ມາດຕາ 13(ປັບປຸງ). ພາສາທີ່ນຳໃຊ້**

ພາສາທີ່ນຳໃຊ້ ເຂົ້າໃນການແກ້ໄຂຂໍ້ຂັດແຍ່ງ ຢູ່ສູນ ຫລື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງແມ່ນພາສາລາວ ເວັ້ນເສັຍແຕ່ ສັນຍາ ຫລື ຄູ່ກໍລະນີ ຫາກໄດ້ຕົກລົງກັນໄວ້ຢ່າງອື່ນ, ສ່ວນຄູ່ກໍລະນີ ຫລື ຜູ້ເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງ ທີ່ບໍ່ຮູ້ພາສາລາວ ສາມາດ

ນຳໃຊ້ພາສາຕົນເອງ ຫລື ພາສາອື່ນ ໂດຍຜ່ານຜູ້ແປພາສາ.

**ມາດຕາ 14(ປັບປຸງ). ການຮັບປະກັນຄວາມລັບ**

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂໍ້ມູນ ແລະ ເອກະສານຕ່າງໆ ທີ່ໄດ້ນຳສະເໜີໃນເວລາ ໄກ່ເກ່ຍ ຫລື ຕັດສິນ ຕ້ອງຮັກສາເປັນຄວາມລັບ.

ຜູ້ໄກ່ເກ່ຍ, ກຳມະການຕັດສິນ, ຄູ່ກໍລະນີ ແລະ ຜູ້ເຂົ້າຮ່ວມອື່ນ ບໍ່ມີສິດເປີດເຜີຍຄວາມລັບ ຕໍ່ບຸກຄົນພາຍນອກ ເວັ້ນເສັຍແຕ່ໄດ້ຮັບອະນຸຍາດຈາກຄູ່ກໍລະນີເທົ່ານັ້ນ.

## ໝວດທີ 2
## ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

**ມາດຕາ 15(ປັບປຸງ). ຮູບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີ ສອງຮູບການ ດັ່ງນີ້:

1. ການແກ້ໄຂດ້ວຍການໄກ່ເກ່ຍ;
2. ການແກ້ໄຂດ້ວຍການຕັດສິນ.

**ມາດຕາ 16(ປັບປຸງ). ຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ນຳມາພິຈາລະນາ**

ຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ນຳມາພິຈາລະນາ ຢູ່ ສູນ ຫລື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານ ເສດຖະກິດ ມີ ດັ່ງນີ້:

1. ເປັນຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ການຄ້າ;
2. ຄູ່ກໍລະນີ ໄດ້ຕົກລົງກັນໄວ້ໃນສັນຍາ;
3. ຄູ່ກໍລະນີ ໄດ້ສະໝັກໃຈໃຫ້ແກ້ໄຂຂໍ້ຂັດແຍ່ງ;
4. ບໍ່ແມ່ນຂໍ້ຂັດແຍ່ງ ທີ່ສານປະຊາຊົນ ພວມດຳເນີນການແກ້ໄຂຢູ່ ຫລື ມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ;
5. ບໍ່ແມ່ນຂໍ້ຂັດແຍ່ງ ທີ່ລະເມີດລະບຽບກົດໝາຍ ກ່ຽວກັບຄວາມໝັ້ນຄົງຂອງຊາດ ຂອງສັງຄົມ ແລະ ສິ່ງແວດລ້ອມ.

## ໝວດທີ 3
## ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

**ມາດຕາ 17(ໃໝ່). ການຍື່ນຄຳຮ້ອງ**

ບຸກຄົນ, ການຈັດຕັ້ງ ທີ່ມີຈຸດປະສົງແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດນັ້ນ ຕ້ອງຍື່ນຄຳຮ້ອງ ແລະ ປະກອບເອກະສານຕ່າງໆທີ່ກ່ຽວຂ້ອງຕໍ່ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບ່ອນທີ່ຄູ່ກໍລະນີ ເຫັນວ່າມີຄວາມສະດວກ ແລະ ເປັນເອກະພາບກັນ. ໃນກໍລະນີທີ່ບໍ່ຕົກລົງເຫັນດີນຳກັນແລ້ວ ກໍໃຫ້ໄປຍື່ນຕໍ່ບ່ອນຂໍ້ຂັດແຍ່ງເກີດຂຶ້ນ.

**ມາດຕາ 18(ໃໝ່). ການປະກອບເອກະສານ**

ການປະກອບເອກະສານທີ່ຍື່ນຕໍ່ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີ ດັ່ງນີ້:

1. ຄຳຮ້ອງ;
2. ສັນຍາທີ່ກ່ຽວຂ້ອງ;
3. ຄຳຕົກລົງເປັນລາຍລັກອັກສອນຂອງຄູ່ກໍລະນີ ທີ່ໃຫ້ນຳເອົາຂໍ້ຂັດແຍ່ງ ມາແກ້ໄຂຢູ່ ສູນ ຫລື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຖ້າມີ;
4. ຂໍ້ມູນ ຫລື ເອກະສານອື່ນ ທີ່ເປັນຫລັກຖານ.

**ມາດຕາ 19(ປັບປຸງ). ເນື້ອໃນຄຳຮ້ອງ**

ຄຳຮ້ອງຂໍແກ້ໄຂຂໍ້ຂັດແຍ່ງ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ທີ່ຢູ່ປັດຈຸບັນ ແລະ ສະຖານທີ່ຕັ້ງກິດຈະການຂອງຄູ່ກໍລະນີ ຫລື ຜູ້ຕາງໜ້າ;
2. ບັນຫາທີ່ເກີດຂໍ້ຂັດແຍ່ງ;
3. ມູນຄ່າຂອງຂໍ້ຂັດແຍ່ງ;
4. ຂໍສະເໜີຂອງຄູ່ກໍລະນີ

**ມາດຕາ 20(ປັບປຸງ). ການພິຈາລະນາຄຳຮ້ອງ**

ຫລັງຈາກໄດ້ຮັບຄຳຮ້ອງແລ້ວ ພາຍໃນກຳນົດເຈັດວັນ ນັບແຕ່ວັນໄດ້ຮັບຄຳຮ້ອງນັ້ນເປັນຕົ້ນໄປ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງກວດກາເບິ່ງສຳນວນຄຳຮ້ອງ ແລະ ອອກໝາຍເຊີນຄູ່ກໍລະນີ ເພື່ອເຂົ້າມາປຶກສາຫາລື ແລະ ຕົກລົງກ່ຽວກັບຮູບການແກ້ໄຂ. ຖ້າວ່າຄູ່ກໍລະນີ ຫາກບໍ່ມາຕາມໝາຍເຊີນ ໂດຍບໍ່ມີເຫດຜົນພຽງພໍ ຄຳຮ້ອງດັ່ງກ່າວ ກໍຕົກໄປ ແລະ ສົ່ງສຳນວນຄຳຮ້ອງຄືນໃຫ້ແກ່ຜູ້ຮ້ອງຂໍ.

ໃນກໍລະນີ ທີ່ຄຳຮ້ອງຫາກບໍ່ຖືກຕ້ອງຕາມມາດຕາ 16 ຂອງກົດໝາຍສະບັບນີ້ ສູນ ຫລື

ຫ້ອງການແກ້ໄຂ ຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຊາບ ພ້ອມດ້ວຍເຫດຜົນ ພາຍໃນກຳນົດ ເຈັດ ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງນັ້ນເປັນຕົ້ນໄປ.

### ມາດຕາ 21(ປັບປຸງ). ການເລືອກຮູບການແກ້ໄຂ

ຄູ່ກໍລະນີ ມີສິດເລືອກເອົາການແກ້ໄຂ ດ້ວຍ ການໄກ່ເກ່ຍ ຫລື ການຕັດສີນ ເວັ້ນເສຍແຕ່ ກໍລະນີທີ່ໄດ້ກຳນົດໄວ້ໃນ ມາດຕາ 27 ຂອງກົດໝາຍສະບັບນີ້.

## ໝວດທີ 4
## ການແກ້ໄຂຂໍ້ຂັດແຍ່ງດ້ວຍການໄກ່ເກ່ຍ

### ມາດຕາ 22(ໃໝ່). ການໄກ່ເກ່ຍ

ການໄກ່ເກ່ຍ ແມ່ນ ການແກ້ໄຂຂໍ້ຂັດແຍ່ງໂດຍຄູ່ກໍລະນີເອງ ດ້ວຍການປະນີປະນອມ, ເຈລະຈາ ແລະ ປຶກສາຫາລື ຊຶ່ງມີຜູ້ໄກ່ເກ່ຍໜຶ່ງ ຫລື ຫລາຍຄົນ ເປັນຄົນກາງ.

### ມາດຕາ 23(ປັບປຸງ). ການເລືອກ ແລະ ການແຕ່ງຕັ້ງຜູ້ໄກ່ເກ່ຍ

ໃນການດຳເນີນການໄກ່ເກ່ຍ ຄູ່ກໍລະນີ ມີສິດເລືອກເອົາຜູ້ໄກ່ເກ່ຍ ໜຶ່ງ ຫລື ຫລາຍຄົນ, ແຕ່ຕ້ອງເປັນຈຳນວນຄີກສະເໝີ ຈາກບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ກຳມະການຕັດສີນ.

ໃນກໍລະນີ ເລືອກຜູ້ໄກ່ເກ່ຍ ໜຶ່ງຄົນ ໃຫ້ຄູ່ກໍລະນີ ຕົກລົງເລືອກເອົາຜູ້ໄກ່ເກ່ຍ ພາຍໃນກຳນົດ ສິບຫ້າ ວັນ ນັບແຕ່ວັນຕົກລົງນັ້ນເປັນຕົ້ນໄປ. ຖ້າຫາກເລືອກບໍ່ໄດ້ ສູນ ຫລື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງເລືອກໃຫ້ ພາຍໃນກຳນົດ ສິບ ວັນ.

ໃນກໍລະນີ ເລືອກຜູ້ໄກ່ເກ່ຍ ສາມ ຄົນ ໃຫ້ຄູ່ກໍລະນີແຕ່ລະຝ່າຍ ເລືອກເອົາໜຶ່ງຄົນ ພາຍໃນກຳນົດ ສິບຫ້າ ວັນ ນັບແຕ່ວັນຕົກລົງນັ້ນເປັນຕົ້ນໄປ. ຖ້າຄູ່ກໍລະນີຝ່າຍໃດໜຶ່ງ ຫາກເລືອກບໍ່ໄດ້ ສູນ ຫລື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງເລືອກໃຫ້ ພາຍໃນກຳນົດ ສິບ ວັນ ຫລັງຈາກນັ້ນ ໃຫ້ຜູ້ໄກ່ເກ່ຍ ສອງ ຄົນ ທີ່ຖືກເລືອກນັ້ນ ເລືອກເອົາຜູ້ໄກ່ເກ່ຍ ຜູ້ທີ່ສາມ ມາເປັນປະທານ ພາຍໃນກຳນົດ ພາຍໃນກຳນົດ ສິບຫ້າ ວັນ, ຖ້າຫາກ ເລືອກບໍ່ໄດ້ ສູນ ຫລື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງເລືອກໃຫ້ ພາຍໃນກຳນົດ ສິບ ວັນ.

ໃນກໍລະນີທີ່ຢູ່ກໍລະນີຕົກລົງເລືອກເອົາຜູ້ໄກ່ເກ່ຍຫລາຍກວ່າ ສາມ ຄົນ ກໍໃຫ້ປະຕິບັດຕາມທີ່ໄດ້ກຳນົດ ໄວ້ໃນວັກ ສາມ ເທິງນີ້.

ສູນ ຫລື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງແຕ່ງຕັ້ງຜູ້ໄກ່ເກ່ຍ ພາຍໃນກຳນົດ ເຈັດວັນ ນັບແຕ່ວັນໄດ້ຮັບລາຍຊື່ຜູ້ໄກ່ເກ່ຍ ຕາມການສະເໜີ ຂອງຄູ່ກໍລະນີ.

**ມາດຕາ 24. ການຖອນຕົວ ຫລື ການຄ້ານຕົວ**

ຜູ້ໄກ່ເກັ່ຍ ມີສິດຖອນຕົວ ຈາກການໄກ່ເກັ່ຍ ຖ້າຫາກເຫັນວ່າຕົນ ເປັນຍາດພີ່ນ້ອງ ຫລື ມີສ່ວນພົວພັນກັບຜົນປະໂຫຍດ ຫລື ມີຂໍ້ຂັດແຍ່ງ ກັບຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ຫລື ບໍ່ສາມາດປະຕິບັດໜ້າທີ່ໄດ້.

ຄູ່ກໍລະນີ ມີສິດຄ້ານຕົວຜູ້ໄກ່ເກັ່ຍ ຖ້າຫາກເຫັນວ່າຜູ້ໄກ່ເກັ່ຍນັ້ນ ຕົກຢູ່ໃນກໍລະນີທີ່ໄດ້ກຳນົດໃນວັກທີ 1 ຂອງມາດຕານີ້.

ໃນກໍລະນີທີ່ ຜູ້ໄກ່ເກັ່ຍ ຫາກໄດ້ຖອນຕົວ ຫລື ຖືກຄ້ານຕົວ ໃຫ້ດຳເນີນການເລືອກ ແລະ ການແຕ່ງຕັ້ງຜູ້ໄກ່ເກັ່ຍຄືນໃໝ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍສະບັບນີ້.

**ມາດຕາ 25. ການດຳເນີນການໄກ່ເກັ່ຍ**

ການໄກ່ເກັ່ຍ ຕ້ອງດຳເນີນພາຍໃນ ສິບຫ້າ ວັນ ນັບແຕ່ວັນແຕ່ງຕັ້ງຜູ້ໄກ່ເກັ່ຍເປັນຕົ້ນໄປ ໂດຍຊ້ອງໜ້າ ຄູ່ກໍລະນີ ຫລື ຜູ້ຕາງໜ້າ.

ຄູ່ກໍລະນີ ມີສິດສະເໜີບັນຫາ, ຂໍ້ມູນ ຫລື ຫລັກຖານຕ່າງໆກ່ຽວກັບຂໍ້ຂັດແຍ່ງ ແລະ ວິທີທາງອອກຕໍ່ຜູ້ໄກ່ເກັ່ຍ ໃນໄລຍະເວລາທາການໄກ່ເກັ່ຍ.

**ມາດຕາ 26(ປັບປຸງ). ການສິ້ນສຸດການໄກ່ເກັ່ຍ**

ການໄກ່ເກັ່ຍ ຈະສິ້ນສຸດລົງໃນກໍລະນີ ດັ່ງນີ້:

1. ຄູ່ກໍລະນີສາມາດຕົກລົງກັນໄດ້;
2. ກໍລະນີຝ່າຍໃດຝ່າຍໜຶ່ງ ຫລື ທັງໝົດບໍ່ເຂົ້າຮ່ວມການໄກ່ເກັ່ຍໂດຍບໍ່ມີເຫດຜົນພຽງພໍ;
3. ຄູ່ກໍລະນີບໍ່ສາມາດຕົກລົງກັນໄດ້;
4. ຄູ່ກໍລະນີຝ່າຍໃດຝ່າຍໜຶ່ງເສັຍຊີວິດໂດຍບໍ່ມີຜູສືບທອດ.

**ມາດຕາ 27(ປັບປຸງ). ການປ່ຽນຮູບການແກ້ໄຂຂໍ້ຂັດແຍ່ງ**

ເມື່ອບໍ່ສາມາດໄກ່ເກັ່ຍກັນໄດ້ ຄູ່ກໍລະນີ ມີສິດສະເໜີໃຫ້ ສູນ ຫລື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດຳເນີນການແກ້ໄຂດ້ວຍການຕັດສິນ. ຜູ້ໄກ່ເກັ່ຍຂໍ້ຂັດແຍ່ງນັ້ນ ບໍ່ມີສິດເປັນຄະນະກຳມະການຕັດສິນຂໍ້ຂັດແຍ່ງນັ້ນອີກ.

ໃນກໍລະນີທີ່ຢູ່ກໍລະນີ ຫາກບໍ່ເຫັນດີໃຫ້ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດຳເນີນການແກ້ໄຂດ້ວຍການຕັດສິນແລ້ວ ຄູ່ກໍລະນີມີສິດຮ້ອງຟ້ອງຕໍ່ສານປະຊາຊົນ.

**ມາດຕາ 28(ປັບປຸງ). ບົດບັນທຶກຂອງການໄກ່ເກ່ຍ**

ບົດບັນທຶກຂອງການໄກ່ເກ່ຍ ຕ້ອງມີເນື້ອໃນ ດັ່ງນີ້:

1. ເວລາ, ວັນ, ເດືອນ, ປີ, ເລື່ອງ ແລະ ເລກທີຂອງຂໍ້ຂັດແຍ່ງ ແລະ ສະຖານທີ່ຂອງການໄກ່ເກ່ຍ;
2. ຊື່ ແລະ ນາມສະກຸນຂອງຜູ້ໄກ່ເກ່ຍ ແລະ ຜູ້ບັນທຶກ;
3. ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ທີ່ຢູ່ປັດຈຸບັນ ແລະ ສະຖານທີ່ຕັ້ງກິດຈະການຂອງ ຄູ່ກໍລະນີ ຫລື ຜູ້ຕາງໜ້າ;
4. ເນື້ອໃນຕົ້ນຕໍຂອງຂໍ້ຂັດແຍ່ງ;
5. ຜົນຂອງການໄກ່ເກ່ຍ;
6. ວິທີຈັດຕັ້ງປະຕິບັດຄໍາຕົກລົງຂອງການໄກ່ເກ່ຍ;
7. ຄວາມຮັບຜິດຊອບໃນການຈ່າຍຄ່າທໍານຽມ, ຄ່າບໍລິການ, ຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງຂອງຄູ່ກໍລະນີແຕ່ລະຝ່າຍ;
8. ເວລາ, ວັນ, ເດືອນ, ປີ ຂອງການສິ້ນສຸດການໄກ່ເກ່ຍ, ລາຍເຊັນຂອງຄູ່ກໍລະນີ ຫລື ຜູ້ຕາງໜ້າຂອງຄູ່ກໍລະນີ, ຜູ້ໄກ່ເກ່ຍ, ຜູ້ບັນທຶກ ແລະ ລາຍເຊັນຂອງຫົວໜ້າ ສູນ ຫລື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບ່ອນທີ່ດໍາເນີນການໄກ່ເກ່ຍນັ້ນ.

ໃນການໄກ່ເກ່ຍແຕ່ລະຄັ້ງ ຕ້ອງມີຜູ້ບັນທຶກເຂົ້າຮ່ວມນໍາ ຊຶ່ງແມ່ນພະນັກງານຂອງສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

## ໝວດທີ 5
## ການແກ້ໄຂຂໍ້ຂັດແຍ່ງດ້ວຍການຕັດສິນ

**ມາດຕາ 29(ໃໝ່). ການຕັດສິນ**

ການຕັດສິນ ແມ່ນ ການຕົກລົງຂອງຄະນະກໍາມະການຕັດສິນ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 30(ປັບປຸງ). ການເລືອກ ແລະ ການແຕ່ງຕັ້ງກໍາມະການຕັດສິນ**

ໃນການແກ້ໄຂຂໍ້ຂັດແຍ່ງດ້ວຍການຕັດສິນນັ້ນ ຄະນະກໍາມະການຕັດສິນ ຕ້ອງປະກອບດ້ວຍ ກໍາມະການຕັດສິນ ແຕ່ ສາມຄົນຂຶ້ນໄປ ຕາມການຕົກລົງຂອງຄູ່ກໍລະນີ ແຕ່ຕ້ອງເປັນຈໍານວນຄີກສະເໝີ.

ໃນການເລືອກກໍາມະການຕັດສິນ ໃຫ້ປະຕິບັດຕາມຫລັກການດຽວກັນ ກັບການເລືອກຜູ້ໄກ່

ເກັ່ຍ ຕາມທີ່ໄດ້ກຳນົດໄວ້ໃນ ວັກທີ 3, 4 ແລະ 5 ຂອງມາດຕາ 23 ຂອງກົດໝາຍສະບັບນີ້.

**ມາດຕາ 31(ປັບປຸງ). ການຖອນຕົວ ຫລື ການຄ້ານຕົວກຳມະການຕັດສິນ**

ການຖອນຕົວ ຫລື ການຄ້ານຕົວກຳມະການຕັດສິນ ໃຫ້ປະຕິບັດຄືກັນກັບການຖອນຕົວ ຫລື ການຄ້ານຕົວຜູ້ໄກ່ເກັ່ຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້.

**ມາດຕາ 32(ປັບປຸງ). ການສະເໜີຂໍ້ມູນ ຫລັກຖານ**

ຄູ່ກໍລະນີ ມີພັນທະສະເໜີຂໍ້ມູນ ຫລັກຖານກ່ຽວກັບຂໍ້ຂັດແຍ່ງໃຫ້ແກ່ຄະນະກຳມະການຕັດສິນ.

ຄະນະກຳມະການຕັດສິນ ອາດຈະລົງເກັບກຳຂໍ້ມູນຫລັກຖານກັບທີ່ ຕາມການສະເໜີ ຫລື ການເຫັນດີ ຂອງຄູ່ກໍລະນີ.

ໃນກໍລະນີຈຳເປັນທີ່ຕ້ອງການພິສູດຂໍ້ມູນ ຫລັກຖານໃດໜຶ່ງ ຄະນະກຳມະການຕັດສິນ ມີສິດສະເໜີເອົາຜູ້ຊ່ຽວຊານ ເພື່ອພິສູດຂໍ້ມູນ ຫັລກຖານນັ້ນ.

ຄະນະກຳມະການຕັດສິນ ຕ້ອງຄົ້ນຄວ້າຄຳຮ້ອງ, ເອກະສານ, ຂໍມູນ ຫລັກຖານ ຢ່າງລະອຽດ, ຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ. ເມື່ອເກັບກຳຂໍ້ມູນ ຫຼັກຖານຄົບຖ້ວນແລ້ວ ຄະນະກຳມະການຕັດສິນ ຕ້ອງເຊີນຄູ່ກໍລະນີ ມາອະທິບາຍເຫດຜົນ ແລະ ສະເໜີຂໍ້ມູນ ຫລັກຖານຕື່ມອີກກ່ອນການຕັດສິນ.

**ມາດຕາ 33(ປັບປຸງ). ກຳນົດເວລາຕັດສິນ**

ການແກ້ໄຂຂໍ້ຂັດແຍ່ງດ້ວຍການຕັດສິນ ຕ້ອງໃຫ້ສຳເລັດພາຍໃນກຳນົດ ສາມ ເດືອນ ນັບແຕ່ວັນ ໄດ້ ແຕ່ງຕັ້ງຄະນະກຳມະການຕັດສິນເປັນຕົ້ນໄປ ເວັ້ນເສັຍແຕ່ກໍລະນີທີ່ມີຄວາມຫຍຸ້ງຍາກຍ້ອນການປະກອບຫລັກຖານ ຫລື ຍ້ອນເຫດຜົນອື່ນ ແຕ່ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງແຈ້ງເຫດຜົນຂອງການບໍ່ສຳເລັດໃຫ້ຄູ່ກໍລະນີຊາບ.

**ມາດຕາ 34(ປັບປຸງ). ມາດຕະການປົກປ້ອງຜົນປະໂຫຍດຂອງຄູ່ກໍລະນີ**

ໃນໄລຍະພິຈາລະນາຂໍ້ຂັດແຍ່ງນັ້ນ ຖ້າຫາກຄູ່ກໍລະນີ ສະເໜີໃຫ້ອອກຄຳສັ່ງຍຶດ, ອາຍັດຊັບ ຫຼື ນຳໃຊ້ມາດຕະການໃດໜຶ່ງ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນແລ້ວ ຖ້າເຫັນວ່າມີຄວາມຈຳເປັນ ຄະນະກຳມະການຕັດສິນ ຈະສົ່ງຄຳສະເໜີ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງໄປຍັງສານປະຊາຊົນ ເພື່ອພິຈາລະນາອອກຄຳສັ່ງ ພາຍໃນກຳນົດ ເຈັດ ວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ.

**ມາດຕາ 35(ປັບປຸງ). ສິດໃນການຕົກລົງຂອງຄູ່ກໍລະນີກ່ອນການຕັດສີນ**

ໃນໄລຍະຄະນະກຳມະການຕັດສິນ ພິຈາລະນາຂໍ້ຂັດແຍ່ງນັ້ນ ຄູ່ກໍລະນີ ຍັງມີສິດຕົກລົງແກ້ໄຂນຳກັນກ່ອນການຕັດສິນກໍໄດ້. ຄຳຕົກລົງຂອງຄູ່ກໍລະນີນັ້ນ ຕ້ອງເຮັດເປັນລາຍລັກອັກສອນ ໂດຍມີລາຍເຊັນຂອງ ຄູ່ກໍລະນີ, ຄະນະກຳມະການຕັດສິນ ແລະ ຫົວໜ້າສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບ່ອນດຳເນີນນັ້ນ.

ຄຳຕົກລົງຂອງຄູ່ກໍລະນີກ່ອນການຕັດສິນ ມີຜົນສັກສິດ ຄືກັນກັບຄຳຕັດສິນຂອງຄະນະກຳມະການຕັດສິນ.

**ມາດຕາ 36. ຄຳຕັດສິນຂອງຄະນະກຳມະການຕັດສິນ**

ຄຳຕັດສິນຂອງຄະນະກຳມະການຕັດສິນ ຕ້ອງຢູ່ໃນຂອບເຂດຄຳຮ້ອງຂອງຄູ່ກໍລະນີ. ໃນກໍລະນີທີ່ ຄະນະກຳມະການຕັດສິນ ຫາກບໍ່ເປັນເອກະສັນກັນ ການຕັດສິນໃຫ້ຖືເອົາຕາມສຽງສ່ວນຫລາຍ.

ຄຳຕັດສິນຂອງຄະນະກຳມະການຕັດສິນ ຕ້ອງອ່ານຊ້ອງໜ້າຄູ່ກໍລະນີ ຫລື ຜູ້ຕາງໜ້າ ແລະ ມີຜົນສັກ ສິດ ນັບແຕ່ວັນລົງຄຳຕັດສິນ ຫລື ວັນໄດ້ຮັບຊາບຄຳຕັດສິນນັ້ນເປັນຕົ້ນໄປ ເມື່ອຄູ່ກໍລະນີຝ່າຍໃດໜຶ່ງ ຫາກບໍ່ເຂົ້າມາຟັງຄຳຕັດສິນ ຕາມໝາຍເຊີນ ໂດຍບໍ່ມີເຫດຜົນພຽງພໍ.

**ມາດຕາ 37(ປັບປຸງ). ເນື້ອໃນຄຳຕັດສິນຂອງຄະນະກຳມະການ**

ຄຳຕັດສິນຂອງຄະນະກຳມະການ ມີເນື້ອໃນ ດັ່ງນີ້:

1. ເວລາ, ວັນ, ເດືອນ, ປີ, ເລື່ອງ ແລະ ເລກທີ ຂອງຂໍ້ຂັດແຍ່ງ ແລະ ສະຖານທີ່ອອກຄຳຕັດສິນ;
2. ຊື່ ແລະ ນາມສະກຸນຂອງຄະນະກຳມະການຕັດສິນ ແລະ ຜູ້ບັນທຶກ;
3. ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ທີ່ຢູ່ປັດຈຸບັນ ແລະ ສະຖານທີຕັ້ງກິດຈະການຂອງຄູ່ກໍລະນີ ຫລື ຜູ້ຕາງໜ້າ;
4. ເນື້ອໃນຕົ້ນຕໍຂອງຂໍ້ຂັດແຍ່ງ, ຄຳວິນິດໄສ ແລະ ບ່ອນອີງຂອງຄຳຕັດສິນ;
5. ການຕັດສິນ;
6. ຄວາມຮັບຜິດຊອບໃນການໃຊ້ຈ່າຍຄ່າທຳນຽມ, ຄ່າແຮງງານ ແລະ ຄ່າບໍລິການຕ່າງໆ ຂອງຄູ່ກໍລະນີແຕ່ລະຝ່າຍ;
7. ລາຍເຊັນຂອງຄະນະກຳມະການຕັດສິນ, ຜູ້ບັນທຶກ ແລະ ລາຍເຊັນຂອງ ຫົວໜ້າສູນ ຫລື ຫ້ອງການແກ້ໄຂຂໍ້ຂັດແຍ່ງດ້ານເສດຖະກິດ ບ່ອນດຳເນີນນັ້ນ.

**ມາດຕາ 38(ໃໝ່). ການຄັດຄ້ານຄຳຕັດສິນ**

ຄູ່ກໍລະນີ ມີສິດສະເໜີຕໍ່ສານປະຊາຊົນ ເພື່ອຄັດຄ້ານຄຳຕັດສັນຂອງຄະນະກຳມະການຕັດສິນ ພາຍໃນກຳນົດ ສີ່ສິບຫ້າ ວັນ ນັບແຕ່ວັນໄດ້ຮັບຊາບຄຳຕັດສິນເປັນຕົ້ນໄປ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຄູ່ກໍລະນີບໍ່ໄດ້ຕົກລົງໃຫ້ມີການຕັດສິນດ້ວຍຄະນະກຳມະການຕັດສິນ ຫລື ຄຳຕົກລົງນັ້ນເປັນໂມຄະ;
2. ການປະກອບຄະນະກຳມະການຕັດສິນ ບໍ່ສອດຄອງກັບການຕົກລົງຂອງຄູ່ກໍລະນີ ແລະ ລະບຽບກົດໝາຍ;
3. ການດຳເນີນການຕັດສິນ ບໍ່ສອດຄ່ອງກັບລະບຽບກົດໝາຍກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ ທີ່ຄູ່ກໍລະນີຕົກລົງກັນໃນສັນຍາ;
4. ຂໍ້ມູນຫລັກຖານທີ່ຄະນະກຳມະການຕັດສິນ ຖືເປັນພື້ນຖານໃນການຕັດສິນນັ້ນ ມີການປອມແປງ ຫລື ກຳມະການຕັດສິນ ຮັບເງິນ, ຊັບສິນ ຫຼື ຜົນປະໂຫຍດອື່ນ ຊຶ່ງສົ່ງຜົນກະທົບຕໍ່ຄວາມທ່ຽງທຳໃນການຕັດສິນ;
5. ຂັດແຍ່ງ ບໍ່ຢູ່ໃນຂອບເຂດສິດຂອງການແກ້ໄຂ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;
6. ຄຳຕັດສິນເກີນ ຫລື ບໍ່ຄົບຖ້ວນ ຕາມຄຳຮ້ອງຂໍຂອງຄູ່ກໍລະນີ.

## ພາກທີ III
## ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

**ມາດຕາ 39(ປັບປຸງ). ທີ່ຕັ້ງ ແລະ ພາລະບົດບາດ**

ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນ ອົງການຈັດຕັ້ງ ທີ່ມີລັກສະນະວິຊາຊີບ ສັງຄົມ ແລະ ກົດໝາຍ ຢູ່ພາຍໃຕ້ການຄຸ້ມຄອງຂອງຂະແໜງການຍຸຕິທຳ, ມີພາລະບົດບາດ, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ຄູ່ກໍລະນີ, ຜູ້ໄກ່ເກັ່ຍ ແລະ ກຳມະການຕັດສິນ ໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 40(ໃໝ່). ໂຄງປະກອບຂອງສູນ ແລະ ຫ້ອງການ**

ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີຊື່ຫຍໍ້ວ່າ “ສກສ” ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງຍຸຕິທຳ ແລະ ມີຖານະທຽບເທົ່າກົມ;

ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີຊື່ຫຍໍ້ວ່າ “ຫກສ” ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງພະແນກຍຸຕິທຳ; ຫົວໜ້າຫ້ອງການ ມີຖານະທຽບເທົ່າ ຮອງຫົວໜ້າພະແນກຂອງ

ແຂວງ, ນະຄອນ.

ສໍາລັບໂຄງປະກອບການຈັດຕັ້ງ ແລະ ບຸກຄະລະກອນຂອງ ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 41(ປັບປຸງ). ສິດ ແລະ ໜ້າທີ່ຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ສະເໜີສ້າງ, ປັບປຸງລະບຽບກົດໝາຍ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ຂັ້ນເທິງທີ່ກ່ຽວຂ້ອງພິຈາລະນາ;
2. ຄົ້ນຄວ້າ ແລະ ນໍາສະເໜີຕໍ່ລັດຖະມົນຕີວ່າການ ກະຊວງຍຸຕິທໍາ ເພື່ອແຕ່ງຕັ້ງ ຜູ້ໄກ່ເກ່ຍ ແລະ ກໍາມະການຕັດສິນ ເຂົ້າໃນບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ກໍາມະການຕັດສິນ ຫລື ປົດບຸກຄົນດັ່ງກ່າວອອກຈາກບັນຊີ;
3. ໂຄສະນາ, ສຶກສາອົບຮົມ ລະບຽບກົດໝາຍ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ພິຈາລະນາແຕ່ງຕັ້ງ, ປົດ ຫລື ປ່ຽນ ຜູ້ໄກ່ເກ່ຍ ແລະ ກໍາມະການຕັດສິນ ເຂົ້າໃນການແກ້ໄຂຂໍ້ຂັດແຍ່ງແຕ່ລະຄັ້ງ ຕາມລະບຽບກົດໝາຍ;
5. ຄຸ້ມຄອງ ແລະ ອໍານວຍຄວາມສະດວກໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃນຂອບເຂດທີ່ຕົນຮັບຜິດຊອບ;
6. ຮັບຄໍາຮ້ອງ, ເອກະສານ, ຂໍ້ມູນ, ຫລັກຖານ ຈາກຄູ່ກໍລະນີ;
7. ກໍ່ສ້າງ, ບໍາລຸງ ແລະ ຍົກລະດັບທາງດ້ານວິຊາການໃຫ້ແກ່ພະນັກງານຂອງສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຜູ້ໄກ່ເກ່ຍ ແລະ ກໍາມະການຕັດສິນ;
8. ຕິດຕໍ່ພົວພັນກັບຄູ່ກໍລະນີ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອອໍານວຍຄວາມສະດວກໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
9. ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມການມອບໝາຍຂອງຂັ້ນເທິງ;
10. ສະຫລຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ກະຊວງຍຸຕິທໍາ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 42(ໃໝ່). ສິດ ແລະ ໜ້າທີ່ຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີສິດ ແລະ ໜ້າທີ່ດັ່ງດຽວກັນກັບສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 41 ຂອງກົດໝາຍສະບັບນີ້.

ສຳລັບ ສິດ ສະເໜີແຕ່ງຕັ້ງ, ປົດ ຜູ້ໄກ່ເກ່ຍ, ກຳມະການຕັດສິນ ເຂົ້າໃນບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນນັ້ນ ຕ້ອງສະເໜີຕໍ່ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາ.

## ພາກທີ IV
## ຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນ

### ມາດຕາ 43(ປັບປຸງ). ຜູ້ໄກ່ເກ່ຍ

ຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນ ປະກອບດ້ວຍ ຜູ້ປະຈຳການ ແລະ ຜູ້ບໍ່ປະຈຳການ.

ຜູ້ບໍ່ປະຈຳການ ແມ່ນ ພະນັກງານຂອງສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ຖືກແຕ່ງຕັ້ງຈາກ ລັດຖະມົນຕີວ່າການກະຊວງຍຸຕິທຳ.

ຜູ້ປະຈຳການ ແມ່ນ ບຸກຄົນທີ່ມາຈາກສຳນັກງານ, ອົງການ, ຫົວໜ່ວຍທຸລະກິດ ທັງພາກລັດ ແລະ ເອກະຊົນ, ຄົນຕ່າງປະເທດ ແລະ ຄົນຕ່າງດ້າວ ທີ່ມີຄວາມສະໝັກໃຈ ຊຶ່ງໄດ້ຮັບການແຕ່ງຕັ້ງ ຈາກລັດຖະມົນຕີວ່າການກະຊວງຍຸຕິທຳ ຕາມການຄັດເລືອກ ແລະ ການສະເໜີຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

### ມາດຕາ 44(ປັບປຸງ). ມາດຕະຖານຂອງຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນ

ຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນທີ່ເປັນພົນລະເມືອງລາວ ຕ້ອງມີມາດຕະຖານ ດັ່ງນີ້:

1. ມີຄຸນສົມບັດ, ມີຈັນຍາທຳ ແລະ ບໍລິສຸດສັດຊື່;
2. ມີຄວາມຮູ້ຄວາມສາມາດທາງດ້ານວິຊາສະເພາະໃດໜຶ່ງທີ່ແນ່ນອນ ໂດຍມີໃບຢັ້ງຢືນຢ່າງຖືກຕ້ອງ;
3. ໄດ້ຜ່ານ ຫລື ມີປະສົບປະການໃນວຽກງານ ຢ່າງໜ້ອຍ ຫ້າ ປີ;
4. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ຍ້ອນການກະທຳຜິດໂດຍເຈດຕະນາ;
5. ໄດ້ຜ່ານການຝຶກອົບຮົມກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
6. ມີສຸຂະພາບ.

### ມາດຕາ 45(ໃໝ່). ປື້ມບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນ

ປຶ້ມບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນ ແມ່ນ ປຶ້ມສັງລວມລາຍຊື່ຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນ ລວມທັງປະຫວັດຫຍໍ້ຂອງພວກກ່ຽວ.

ພາຍຫລັງ ລັດຖະມົນຕີວ່າການກະຊວງຍຸຕິທຳ ໄດ້ແຕ່ງຕັ້ງຜູ້ໄກ່ເກ່ຍ ແລະ ກຳມະການ

ຕັດສິນແລ້ວ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງສ້າງເປັນປຶ້ມບັນຊີລາຍຊື່ ຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນ ແລ້ວຈັດພິມສົ່ງໃຫ້ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 46(ໃໝ່). ສິດ ແລະ ໜ້າທີ່ຂອງຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນ**

ຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບ ຫລື ປະຕິເສດ ການແກ້ໄຂຂໍ້ຂັດແຍ່ງ;
2. ເປັນເອກະລາດໃນການແກ້ໄຂຂໍ້ຂັດແຍ່ງ;
3. ຮັບປະກັນການແກ້ໄຂຂໍ້ຂັດແຍ່ງ ໃຫ້ມີຄວາມຍຸຕິທຳ, ວ່ອງໄວ ແລະ ປອດໃສ;
4. ປະຕິບັດຖືກຕ້ອງຕາມຫລັກຈັນຍາທຳຂອງວິຊາຊີບ;
5. ລົງເກັບກຳຂໍ້ມູນ, ຫລັກຖານກັບທີ່;
6. ໄດ້ຮັບຄ່າແຮງງານ ຕາມການຕົກລົງກັບຄູ່ກໍລະນີ;
7. ຮັກສາຄວາມລັບຂອງຂໍ້ຂັດແຍ່ງ ຍົກເວັ້ນຂໍ້ມູນທີ່ຕ້ອງສະໜອງ ໃຫ້ຂະແໜງການທີ່ກ່ຽວຂ້ອງ ຕາມລະບຽບກົດໝາຍ;
8. ເສັຍພັນທະໃຫ້ລັດ ຕາມລະບຽບກົດໝາຍ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 47(ໃໝ່). ຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນຕ່າງປະເທດ**

ຄົນຕ່າງປະເທດ ສາມາດເປັນຜູ້ໄກ່ເກ່ຍ, ກຳມະການຕັດສິນ ຢູ່ ສປປ ລາວໄດ້.

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຄູ່ກໍລະນີ ມີສິດເລືອກເອົາ ຜູ້ໄກ່ເກ່ຍ ຫຼື ກຳມະການ ຕັດສິນຕ່າງປະເທດ ທີ່ມີໃນບັນຊີລາຍຊື່ຜູ້ໄກ່ເກ່ຍ ຫລື ກຳມະການຕັດສິນ.

ສຳລັບມາດຕະຖານ ແລະ ເງື່ອນໄຂຂອງຜູ້ໄກ່ເກ່ຍ ຫລື ກຳມະການຕັດສິນຕ່າງປະເທດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ V
## ການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

**ມາດຕາ 48. ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ:

1. ຄຳຕົກລົງຂອງການໄກ່ເກ່ຍ;
2. ຄຳຕົກລົງຂອງຄູ່ກໍລະນີ ກ່ອນການຕັດສິນ;

3. ຄຳຕັດສິນຂອງຄະນະກຳມະການຕັດສິນ.

**ມາດຕາ 49. ພັນທະຂອງຄູ່ກໍລະນີ**

ຄູ່ກໍລະນີ ມີພັນທະປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍໃນກຳນົດ ສິບຫ້າ ວັນ ນັບແຕ່ວັນໄດ້ມີຄຳຕົກລົງ ຫລື ຄຳຕັດສິນ ເປັນຕົ້ນໄປ ຫລື ນັບແຕ່ວັນ ຄູ່ກໍລະນີໄດ້ຮັບຊາບຄຳຕັດສິນເປັນຕົ້ນໄປ ເມື່ອຄູ່ກໍລະນີຝ່າຍໃດໜຶ່ງ ຫາກບໍ່ເຂົ້າມາຟັງຄຳຕັດສິນຕາມໝາຍເຊີນ ໂດຍບໍ່ມີເຫດຜົນພຽງພໍ.

**ມາດຕາ 50. ສິດຂອງຜູ້ອັບປະໂຫຍດ**

ຄູ່ກໍລະນີຝ່າຍທີ່ໄດ້ຮັບຄວາມອັບປະໂຫຍດ ຈາກການບໍ່ປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານ ເສດຖະກິດ ມີສິດຮ້ອງຂໍຕໍ່ສານປະຊາຊົນ ພິຈາລະນາອອກຄຳຊີ້ຂາດ ເພື່ອບັງຄັບປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ.

**ມາດຕາ 51(ປັບປຸງ). ການຊີ້ຂາດຂອງສານປະຊາຊົນ**

ເມື່ອໄດ້ຮັບຄຳຮ້ອງຂອງຄູ່ກໍລະນີແລ້ວ ສານປະຊາຊົນ ຕ້ອງພິຈາລະນາອອກຄຳຊີ້ຂາດພາຍໃນ ສິບຫ້າ ວັນ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.

ໃນການພິຈາລະນາອອກຄຳຊີ້ຂາດນັ້ນ ສານປະຊາຊົນ ຕ້ອງກວດເບິ່ງການດຳເນີນການແກ້ໄຂຂໍ້ຂັດ ແຍ່ງນັ້ນ ໄດ້ປະຕິບັດຖືກຕ້ອງຕາມລະບຽບກົດໝາຍ, ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ, ບໍ່ແຕະ ຕ້ອງເຖິງຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດລ້ອມ. ຖ້າເຫັນວ່າຖືກຕ້ອງແລ້ວ ສານປະຊາຊົນ ຕ້ອງອອກຄຳຊີ້ຂາດ ເພື່ອບັງຄັບປະຕິບັດ. ຄຳຊີ້ຂາດຂອງສານປະຊາຊົນ ມີຜົນບັງຄັບປະຕິບັດ ໃນທັນໃດ ແລະ ບໍ່ສາມາດອຸທອນໄດ້

ຖ້າ ສານປະຊາຊົນ ຫາກເຫັນວ່າຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ລະເມີດລະບຽບ ກົດໝາຍ, ສານປະຊາຊົນ ກໍຈະບໍ່ລົງຄຳຊີ້ຂາດຢັ້ງຢືນເອົາ. ຄູ່ກໍລະນີ ມີສິດຕົກລົງໃຫ້ ສູນ ຫລື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແກ້ໄຂຄືນໃໝ່ ຫລື ຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນ ຕາມກົດໝາຍ.

**ມາດຕາ 52(ປັບປຸງ). ການຮັບຮູ້ ແລະ ປະຕິບັດຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫລື ສາກົນ**

ສປປ ລາວ ຮັບຮູ້ ແລະ ປະຕິບັດຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫລື ສາກົນ ໂດຍໄດ້ຮັບ ການຢັ້ງຢືນ ຈາກສານປະຊາຊົນ ຂອງ ສປປ ລາວ.

ສານປະຊາຊົນ ຂອງ ສປປ ລາວ ຈະພິຈາລະນາຢັ້ງຢືນຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫລື ສາກົນ ໄດ້ກໍຕໍ່ເມື່ອມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ຄູ່ກໍລະນີ ຕ້ອງຖືສັນຊາດຂອງປະເທດ ທີ່ເປັນພາຄີຂອງສົນທິສັນຍານິວຢອກ ປີ 1958 ວ່າດ້ວຍການຮັບຮູ້ ແລະ ບັງຄັບປະຕິບັດຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫລື ສາກົນ;
2. ບໍ່ຂັດກັບລັດຖະທຳມະນູນ ແລະ ລະບຽບກົດໝາຍກ່ຽວກັບຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດລ້ອມ;
3. ຄູ່ກໍລະນີຝ່າຍທີ່ມີພັນທະໃຊ້ແທນໜີ້ສິນ ມີຊັບສິນ, ກິດຈະການ ຮຸ້ນ, ເງິນຝາກ ຫລື ຊັບສິນອື່ນ ຢູ່ ສປປ ລາວ.

ພາຍຫລັງຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫລື ສາກົນ ໄດ້ຖືກຮັບຮູ້ ແລະ ຢັ້ງຢືນ ຈາກສານປະຊາຊົນ ຂອງ ສປປ ລາວ ແລ້ວ ກໍໃຫ້ຈັດຕັ້ງປະຕິບັດຄຳຕັດສິນດັ່ງກ່າວ ຕາມກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຂອງ ສປປ ລາວ.

## ພາກທີ VI
## ຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

### ມາດຕາ 53(ປັບປຸງ). ຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ຄ່າໃຊ້ຈ່າຍໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ:

1. ຄ່າທຳນຽມ;
2. ຄ່າບໍລິການ;
3. ຄ່າແຮງງານ.

### ມາດຕາ 54(ປັບປຸງ). ຄ່າທຳນຽມ

ຄ່າທຳນຽມ ແມ່ນ ພັນທະຂອງຄູ່ກໍລະນີ ທີ່ຕ້ອງມອບເຂົ້າງົບປະມານແຫ່ງລັດ

ການເກັບຄ່າທຳນຽມ ໃຫ້ປະຕິບັດຕາມລະບຽບການກ່ຽວກັບຄ່າທຳນຽມ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

ໃນການໄກ່ເກ່ຍ ຄູ່ກໍລະນີ ຕ້ອງຈ່າຍຄ່າທຳນຽມຝ່າຍລະເຄິ່ງ ກ່ອນການດຳເນີນການໄກ່ເກ່ຍຂໍ້ຂັດແຍ່ງ ເວັ້ນເສຍແຕ່ໄດ້ຕົກລົງກັນໄວ້ຢ່າງອື່ນ.

ໃນການຕັດສິນນັ້ນ ໃຫ້ຄູ່ກໍລະນີ ຮັບຜິດຊອບຈ່າຍຄ່າທຳນຽມ ຕາມຄຳຕັດສິນຂອງຄະນະກຳມະການຕັດສິນ.

**ມາດຕາ 55(ປັບປຸງ). ຄ່າບໍລິການ**

ຄ່າບໍລິການ ແມ່ນ ຄ່າໃຊ້ຈ່າຍໃນການໄກ່ເກ່ຍ ຫລື ການຕັດສິນ ຂອງຄະນະກຳມະການຕັດສິນ ເຊັ່ນ: ສົ່ງໝາຍເຊີນ, ສຳເນົາເອກະສານ, ຈັດປະຊຸມ ແລະ ອື່ນໆ.

ການເກັບຄ່າບໍລິການ ໃຫ້ປະຕິບັດຕາມລະບຽບການກ່ຽວກັບ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ ແລະ ໃຫ້ຜູ້ຮ້ອງຂໍ ເປັນຜູ້ຮັບຜິດຊອບຈ່າຍກ່ອນ ໃນເວລາຍື່ນຄຳຮ້ອງ.

**ມາດຕາ 56(ປັບປຸງ). ຄ່າແຮງງານ**

ຄ່າແຮງງານ ແມ່ນ ຄ່າໃຊ້ຈ່າຍກ່ຽວກັບການເຄື່ອນໄຫວວຽກງານຂອງຜູ້ໄກ່ເກ່ຍ, ກຳມະການຕັດສິນ, ຄ່າໃຊ້ຈ່າຍໃຫ້ຜູ້ຊ່ຽວຊານ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ຈຳເປັນ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງນັ້ນ.

ຄ່າແຮງງານ ແມ່ນ ຄູ່ກໍລະນີເປັນຜູ້ຕົກລົງກັບຜູ້ໄກ່ເກ່ຍ, ກຳມະການຕັດສິນ ຫລື ຜູ້ຊ່ຽວຊານ ແລ້ວແຈ້ງໃຫ້ສູນ, ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບ່ອນແກ້ໄຂຂໍ້ຂັດແຍ່ງນັ້ນຊາບ.

**ພາກທີ VII**

**ຂໍ້ຫ້າມ**

**ມາດຕາ 57(ໃໝ່). ຂໍ້ຫ້າມສຳລັບພະນັກງານ, ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ**

ຫ້າມ ພະນັກງານ, ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ມີພຶດຕິກຳ ດັ່ງນີ້:

1. ເປີດເຜີຍຂໍ້ມູນກ່ຽວກັບເນື້ອໃນຂອງຂໍ້ຂັດແຍ່ງ ທີ່ຕົນໄດ້ຮູ້ ໂດຍບໍ່ໄດ້ຮັບອະນຸຍາດ ຫລື ກົດໝາຍຫາກໄດ້ກຳນົດໄວ້ຢ່າງອື່ນ;
2. ນຳໃຊ້ຂໍ້ມູນ ທີ່ຕົນໄດ້ຮູ້ ເພື່ອຫາຜົນປະໂຫຍດສ່ວນຕົວ ຫລື ເພື່ອທຳລາຍສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;
3. ກົດໜ່ວງ, ຖ່ວງດຶງ, ສ້າງຄວາມຫຍຸ້ງຍາກໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງ;
4. ຮັບ, ທວງເອົາເງິນ ຫລື ຜົນປະໂຫຍດອື່ນໃດໜຶ່ງ ຈາກຄູ່ກໍລະນີ;
5. ເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງທີ່ພົວພັນເຖິງຜົນປະໂຫຍດຂອງຕົນເອງ, ຜົວ, ຫລື ເມັຍ ຫລື ຍາດໃກ້ຊິດຂອງຕົນ;
6. ລຳອຽງໃນການປະຕິບັດໜ້າທີ່;
7. ບັງຄັບ, ນາບຂູ່ ຄູ່ກໍລະນີ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 58(ໃໝ່). ຂໍ້ຫ້າມສຳລັບຄູ່ກໍລະນີ**

ຫ້າມ ຄູ່ກໍລະນີ ມີພຶດຕິກຳ ດັ່ງນີ້:

1. ປອມແປງເອກະສານ ຫລື ຂໍ້ມູນກ່ຽວກັບຂໍ້ຂັດແຍ່ງ;
2. ບັງຄັບ, ນາບຂູ່ ຫລື ໃຊ້ຄວາມຮຸນແຮງ, ຕົວະຍົວະ, ຫລອກລວງ ພະນັກງານ, ຜູ້ໄກ່ເກ່ຍ, ກຳມະການຕັດສິນ ແລະ ຜູ້ຊ່ຽວຊານ;
3. ໃຫ້ສິນບົນ ຫລື ຜົນປະໂຫຍດອື່ນແກ່ ພະນັກງານ, ຜູ້ໄກ່ເກ່ຍ, ກຳມະການຕັດສິນ ແລະ ຜູ້ຊ່ຽວຊານ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 59(ໃໝ່). ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ບໍ່ໃຫ້ການຮ່ວມມື, ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານ, ຜູ້ໄກ່ເກ່ຍ, ກຳມະການຕັດສິນ ແລະ ຜູ້ຊ່ຽວຊານ;
2. ຍຸຍົງຜູ້ອື່ນ ບໍ່ໃຫ້ນຳໃຊ້ການແກ້ໄຂຂໍ້ຂັດແຍ່ງຢູ່ ສູນ ຫລື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
3. ເປັນສື່ກາງໃນການໃຫ້ ແລະ ຮັບສິນບົນ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

## ພາກທີ VIII
## ການຄຸ້ມຄອງ ແລະ ການກວດກາ
## ວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

### ໝວດທີ 1
### ການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

**ມາດຕາ 60. ອົງການຄຸ້ມຄອງ**

ອົງການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ:

1. ກະຊວງຍຸຕິທຳ;
2. ພະແນກຍຸຕິທຳແຂວງ, ນະຄອນ.

**ມາດຕາ 61(ປັບປຸງ). ສິດ ແລະ ໜ້າທີ່ຂອງກະຊວງຍຸຕິທຳ**

ໃນການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ກະຊວງຍຸຕິທຳ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງແຜນຍຸດທະສາດ, ແຜນການ, ລະບຽບກົດໝາຍກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອສະເໜີຕໍ່ລັດຖະບານ ພິຈາລະນາ;
2. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
3. ຊີ້ນຳ ແລະ ຄຸ້ມຄອງດ້ານການຈັດຕັ້ງ, ງົບປະມານຂອງ ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ຊີ້ນຳ, ຕິດຕາມການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນຂອບເຂດທົ່ວປະເທດ;
5. ກໍ່ສ້າງ, ບຳລຸງ ແລະ ຍົກລະດັບຄວາມຮູ້ຄວາມສາມາດ, ຈັນຍາທຳ ແລະ ວິຊາສະເພາະ ໃຫ້ພະນັກງານຂອງ ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນ;
6. ສະເໜີນາຍົກລັດຖະມົນຕີ ແຕ່ງຕັ້ງ, ປົດຕຳແໜ່ງ ຫລື ຍົກຍ້າຍ ຫົວໜ້າສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
7. ແຕ່ງຕັ້ງ, ປົດຕຳແໜ່ງ ຫລື ຍົກຍ້າຍ ຮອງຫົວໜ້າສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຫົວໜ້າ ແລະ ຮອງຫົວໜ້າຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໂດຍປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ;
8. ແຕ່ງຕັ້ງ ຫລື ປົດ ຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນ ເຂົ້າໃນ ຫລື ອອກຈາກບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນ ຕາມການສະເໜີ ຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
9. ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດ;
10. ຮ່ວມມືກັບຕ່າງປະເທດພາກພື້ນ ແລະ ສາກົນ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດ;
11. ສະຫລຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ລັດຖະບານ;
12. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 62(ປັບປຸງ). ສິດ ແລະ ໜ້າທີ່ຂອງພະແນກຍຸຕິທຳແຂວງ, ນະຄອນ**

ໃນການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພະແນກຍຸຕິທຳແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດ, ແຜນການ, ລະບຽບກົດໝາຍ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
2. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມ ລະບຽບກົດໝາຍກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
3. ຊີ້ນຳ ແລະ ຄຸ້ມຄອງດ້ານການຈັດຕັ້ງ ແລະ ງົບປະມານຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
4. ຊີ້ນຳ, ຕິດຕາມ ການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ສະເໜີຕໍ່ກະຊວງຍຸຕິທຳ, ກ່ຽວກັບການສ້າງຕັ້ງ ແລະ ປັບປຸງຫ້ອງການ, ການແຕ່ງຕັ້ງ, ປົດຕຳແໜ່ງ ຫລື ຍົກຍ້າຍຫົວໜ້າ, ຮອງຫົວໜ້າຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ;
6. ຮັບ, ຄົ້ນຄວ້າ ແລະ ແກ້ໄຂຄຳຮ້ອງຂອງບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
7. ຊີ້ນຳວຽກງານສະຫລຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານຂອງ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອລາຍງານ ຕໍ່ກະຊວງຍຸຕິທຳ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 2
## ການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

**ມາດຕາ 63(ປັບປຸງ). ອົງການກວດກາ**

ອົງການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີສອງ ປະເພດ ດັ່ງນີ້:

1. ອົງການກວດກາພາຍໃນ ຊຶ່ງແມ່ນພາກສ່ວນໜຶ່ງຂອງອົງການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 60 ຂອງກົດໝາຍສະບັບນີ້;
2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ອົງການກວດກາລັດ, ອົງການກວດ

ສອບແຫ່ງລັດ ແລະ ອົງການໄອຍະການປະຊາຊົນ.

ການກວດກາພາຍນອກ ຈະດຳເນີນຕາມຄຳສະເໜີ ຂອງບຸກຄົນ, ການຈັດຕັ້ງໃດໜຶ່ງ ຫລື ລິເລີ່ມ ໂດຍອົງການກວດກາພາຍນອກເອງ ໃນກໍລະນີທີ່ເຫັນວ່າມີບັນຫາບໍ່ຈະແຈ້ງ, ບໍ່ໂປ່ງໃສ.

**ມາດຕາ 64(ໃໝ່). ເນື້ອໃນການກວດກາ**

**ເນື້ອໃນຕົ້ນຕໍຂອງການກວດກາ ມີ ດັ່ງນີ້:**

1. ການຈັດຕັ້ງປະຕິບັດລະບຽບກົດໝາຍ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
2. ຄຳຮ້ອງຂອງບຸກຄົນ ຫລື ນິຕິບຸກຄົນ ກ່ຽວກັບການແກ້ໄຂຂໍ້ແຍ່ງທາງດ້ານເສດຖະກິດ;
3. ການເຄື່ອນໄຫວຂອງ ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຄຸ້ມຄອງ ແລະ ການນຳໃຊ້ ລາຍຮັບ-ລາຍຈ່າຍ ຂອງ ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
5. ຄວາມຮັບຜິດຊອບ ແລະ ການປະພຶດ ຂອງພະນັກງານຢູ່ ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຂອງ ຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນ.

**ມາດຕາ 65(ໃໝ່). ຮູບການການກວດກາ**

ການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດຳເນີນດ້ວຍຮູບການ ຕາມລະບົບປົກກະຕິ, ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແລະ ແບບກະທັນຫັນ.

ການກວດກາ ຕາມລະບົບປົກກະຕິ ແມ່ນ ການກວດກາຕາມແຜນການ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍ ໜຶ່ງເທື່ອຕໍ່ປີ.

ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອຫາກເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນລ່ວງໜ້າ ຢ່າງໜ້ອຍ ຊາວສີ່ຊົ່ວໂມງ.

ການກວດກາ ແບບກະທັນຫັນ ແມ່ນ ການກວດການອກແຜນການ ເມື່ອຫາກເຫັນວ່າມີຄວາມຈຳເປັນ ແຕ່ການລົງກວດການັ້ນ ແມ່ນດຳເນີນຢ່າງຮີບດ່ວນໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ

ໃນການກວດການັ້ນ ໃຫ້ດຳເນີນທັງການກວດກາເອກະສານ ແລະ ລົງກວດກາຕົວຈິງຢູ່ສະຖານທີ່ປະຕິບັດງານ.

## ພາກທີ IX
## ງົບປະມານ, ເຄື່ອງໝາຍ ແລະ ຕາປະທັບ

**ມາດຕາ 66(ປັບປຸງ). ງົບປະມານ**

ງົບປະມານໃນການເຄື່ອນໄຫວວຽກງານຂອງ ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນ ອີງໃສ່ງົບປະມານຂອງລັດ ແລະ ໃຫ້ປະຕິບັດ ດັ່ງນີ້:

1. ງົບປະມານ ຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນ ຂຶ້ນກັບກະຊວງຍຸຕິທຳ;
2. ງົບປະມານ ຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນ ຂຶ້ນກັບພະແນກຍຸຕິທຳແຂວງ, ນະຄອນ ທີ່ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕັ້ງຢູ່.

**ມາດຕາ 67(ປັບປຸງ). ເຄື່ອງໝາຍ**

ເຄື່ອງໝາຍຂອງ ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນຮູບກາຊິງຊັ່ງຢູ່ ໃນຮູບວົງມົນ ແລະ ມີຕົວໜັງສື ຂຽນວາ: “ສກສ” ຫລື “ຫກສ” ຢູ່ພື້ນຊິງຊັ່ງ.

**ມາດຕາ 68. ຕາປະທັບ**

ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີຕາປະທັບຂອງຕົນ ເພື່ອນຳໃຊ້ເຂົ້າໃນວຽກງານທາງລັດຖະການ

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 69(ປັບປຸງ). ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການໄກ່ເກັ່ຍ, ການຕັດສິນທີ່ມີປະສິດທິພາບ ຈະໄດ້ຮັບການຍ້ອງຍໍ ຫລື ນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 70(ປັບປຸງ). ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ການເປີດເຜີຍຂໍ້ມູນກ່ຽວກັບ ເນື້ອໃນຂໍ້ຂັດແຍ່ງ ໂດຍບໍ່ໄດ້ຮັບອະນຸຍາດ, ໃຫ້ ຫລື ຮັບສິນບົນ, ສວຍໃຊ້ໜ້າທີ່ ຫລື ມີການກະທຳໃດໜຶ່ງ ທີ່ກໍ່ໃຫ້ເກີດຄວາມ ເສັຍຫາຍແກ່ລັດ, ສັງຄົມ ຫລື ບຸກຄົນອື່ນ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ ຫລື ຖືກດຳເນີນຄະດີ ຕາມລະບຽບກົດໝາຍ

ຕາມກໍລະນີເບົາ ຫລື ໜັກ ແລະ ໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

ຜູ້ໄກ່ເກັ່ຍ ຫລື ກໍາມະການຕັດສິນ ທີ່ມີຄວາມຜິດໂດຍເຈດຕະນາ ໃນການປະຕິບັດໜ້າທີ່ຂອງຕົນ ຈະຖືກສຶກສາອົບຮົມ ຫລື ຈະຖືກປົດອອກຈາກບັນຊີລາຍຊື່ຜູ້ໄກ່ເກັ່ຍ ຫລື ກໍາມະການຕັດສິນ ຕາມກໍລະນີເບົາ ຫລື ໜັກ, ຖ້າຫາກເປັນການກະທໍາຜິດທາງອາຍາ ກໍຈະຖືກດໍາເນີນຄະດີຕາມກົດໝາຍ.

## ພາກທີ XI
## ບົດບັນຍັດສຸດທ້າຍ

### ມາດຕາ 71. ການຈັດຕັ້ງປະຕິບັດ

ລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ອອກດໍາລັດຈັດຕັ້ງປະຕິບັດກົດໝາຍສະບັບນີ້.

### ມາດຕາ 72. ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫລັງ ຫົກສິບວັນ ນັບແຕ່ວັນປະທານປະເທດແຫ່ງ ສປປ ລາວ ອອກ ລັດຖະດໍາລັດ ປະກາດໃຊ້ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດ ສະບັບ ເລກທີ 02/ສພຊ, ລົງວັນທີ 19 ພຶດສະພາ 2005.

ຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ທອງສິງ ທໍາມະວົງ